FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງອັດຕະປື

ເລກທີ: 307 /ຈຂ.ອປ

ອັດຕະປື, ວັນທີ: 07 ມີນາ 2022

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຮັບຜິດຊອບ, ຄຸ້ມຄອງ ຕິດຕາມ, ປະສານງານ ແລະ ຊຸກຍູ້ໂຄງການກໍ່ສ້າງໂຮງຜະລິດໄຟຟ້າຈາກກັງຫັນລົມຂະໜາດກຳລັງ ຕິດຕັ້ງ 600 MW (ສະຖານີ 115 kV, ຢູ່ບ້ານດາກນຶງ ແລະ ສາຍສົ່ງ 115 kV), ເລີ່ມແຕ່ເຂດ ເມືອງດາກຈຶງ ແຂວງເຊກອງ ຜ່ານ 8 ບ້ານຄື: ບ້ານດາກນຶງ, ບ້ານດາກສະມໍ, ດາກຍຶກ, ດາກສຽດ, ດາກຊຶມ, ດາກດໍ, ດາກປາດູກ ແລະ ນໍ້າງອນເໜືອ ເມືອງຊານໄຊ ແຂວງອັດຕະປື.

- ອີງຕາມ ກົດໝາຍການວ່າດ້ວຍປົກຄອງທ້ອງຖິ່ນແຫ່ງ ສ ປ ປ ລາວ (ສະບັບປັບປຸງ) ເລກທີ: 68/ສພຊ, ລົງວັນທີ: 14 ທັນວາ 2015, ໝວດທີ: IV, ມາດຕາ 20: ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.
- ອີງຕາມ ໜັງສືສະເໜີ ຈາກພະແນກພະລັງງານ ແລະ ບໍ່ແຮ່, ເລກທີ: 65/ພບ, ລົງວັນທີ: 25 ກຸມພາ 2022.

### ເຈົ້າແຂວງຕົກລົງ:

ມາດຕາ 1: ເຫັນດີແຕ່ງຕັ້ງຄະນະຊີ້ນຳລວມຂັ້ນແຂວງ, ຂອງໂຄງການກໍ່ສ້າງສະຖານີ ແລະ ສາຍສົ່ງແຮງສູງຂະໜາດ 115kV ແຕ່ບ້ານດາກນຶງ ເມືອງຊານໄຊ ຫາ ເຂດເຊື່ອມຕໍ່ ເມືອງດາກຈຶງ ແຂວງເຊກອງ, ມີດັ່ງນີ້:

| | | |
|---|---|---|
| 1. ທ່ານ ທະນູໄຊ ບັນຊາລິດ | ຮອງເຈົ້າ ແຂວງອັດຕະປື | ເປັນຫົວໜ້າ |
| 2. ທ່ານ ວິທະຍາ ພົມມະຈັນ | ຫົວໜ້າພະແນກ ພບຂ | ເປັນຮອງ (ທັງເປັນຜູ້ປະຈຳການ) |
| 3. ທ່ານ ສຸວັນສີ ແກ້ວວິເສີດ | ເຈົ້າເມືອງຊານໄຊ | ເປັນຄະນະ |
| 4. ທ່ານ ສຸລິສັກ ເດດພະຈັນ | ຮອງຫົວໜ້າຫ້ອງວ່າການແຂວງ | ເປັນຄະນະ |
| 5. ທ່ານ ສົມຫວັງ ສີລາເພັດ | ຮອງຫົວໜ້າພະແນກ ພບ | ເປັນຄະນະ |
| 6. ທ່ານ ນິດສາ ມຽງລາວັນ | ຮອງຫົວໜ້າພະແນກ ພຜທ | ເປັນຄະນະ |
| 7. ທ່ານ ສົມໄຊ ແກ້ວມະນີວັນ | ຮອງຫົວໜ້າພະແນກ ຍທຂ | ເປັນຄະນະ |
| 8. ທ່ານ ສຸກວິໄລ ພອນສາຣະແສນ | ຮອງຫົວໜ້າພະແນກ ຊສ ແຂວງ | ເປັນຄະນະ |
| 9. ທ່ານ ກົງໃຈ ສີດາວົງ | ຮອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້ | ເປັນຄະນະ |

*** ບົດບາດ ແລະ ໜ້າທີ່ຂອງຄະນະຊີ້ນຳລວມຂັ້ນແຂວງ:**

1) ຮັບຜິດຊອບ ໂດຍກົງຕໍ່ການມອບໝາຍຂອງຄະນະອົງການປົກຄອງແຂວງ.
2) ນຳພາ-ຊີ້ນຳຮອບດ້ານຕິດຕາມໜ່ວຍງານຄຸ້ມຄອງສິ່ງແວດລ້ອມ, ໜ່ວຍງານຄຸ້ມຄອງທີ່ດິນ, ການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນໃຫ້ເປັນລະບົບ, ມີຂໍ້ກຳນົດ, ພາລະບົດບາດ, ໜ້າທີ່ ແລະ ຄວາມຮັບຜິຊອບໃຫ້ລະອຽດ.

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

3) ແບ່ງງານ, ແບ່ງຄວາມຮັບຜິດຊອບ, ໃຫ້ແຕ່ລະພາກສ່ວນໃນການຈັດຕັ້ງປະຕິບັດວຽກງານກໍ່ສ້າງ ແລະ ວຽກງານສິ່ງແວດລ້ອມສັງຄົມ ແລະ ທົດແທນຄ່າເສຍຫາຍຂອງປະຊາຊົນ ທີ່ໄດ້ຮັບຜົນກະທົບ.

4) ກຳນົດ ແລະ ຮັບຮອງເອົາອັດຕາຄ່າທົດແທນ, ຮັບຮອງເອົາແຜນການ ແລະ ນະໂຍບາຍການທົດແທນຄ່າເສຍຫາຍຕ່າງໆ ໃຫ້ຖືກຕ້ອງສອດຄ່ອງຕາມກົດໝາຍ ແລະ ສະພາບຕົວຈິງ.

5) ຮັບຮອງແຜນການ, ແຜນງານ, ແຜນງົບປະມານ ແລະ ແຜນບຸກຄະລາກອນສຳລັບວຽກງານກໍ່ສ້າງ, ວຽກງານສິ່ງແວດລ້ອມສັງຄົມ ແລະ ວຽກງານທົດແທນຄ່າເສຍຫາຍ.

6) ກຳນົດວິທີການນຳໃຊ້ງົບປະມານບໍລິຫານ ທີ່ໂຄງການສະໜອງໃຫ້ຢ່າງມີປະສິດທິຜົນ, ໂປ່ງໃສ ແລະ ຖືກຕ້ອງຕາມລະບຽບວິໄນຂອງການເງິນ.

7) ໃຫ້ຄຳແນະນຳໃນການແກ້ໄຂຂໍ້ຂັດແຍ່ງຕ່າງໆ.ທີ່ອາດຈະເກີດຂຶ້ນໃນໄລຍະກໍ່ສ້າງກ່ຽວກັບວຽກງານ ສິ່ງແວດລ້ອມສັງຄົມ ແລະ ວຽກງານທົດແທນຄ່າເສຍຫາຍ.

8) ຕິດຕາມ, ກວດກາ ແລະ ຊຸກຍູ້ຈັດຕັ້ງ ປະຕິບັດວຽກງານ ກໍ່ສ້າງ, ວຽກງານສິ່ງແວດລ້ອມສັງຄົມ ແລະ ວຽກງານທົດແທນຄ່າເສຍຫາຍໃຫ້ປະສົບຜົນສຳເລັດຕາມຄາດໝາຍ.

9) ຮ່ວມຈັດກອງປະຊຸມ ປຶກສາຫາລືວາງແຜນການເຄື່ອນໄຫວປະສານງານ ແລະ ຊຸກຍູ້ວຽກງານຂອງໂຄງການໃຫ້ກັບຄະນະດັ່ງກ່າວ, ປະສານງານສົມທົບທຸກພາກສ່ວນກ່ຽວຂ້ອງເພື່ອຈັດຕັ້ງປະຕິບັດໃຫ້ໂຄງການດັ່ງກ່າວໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

10) ປະສານສົມທົບກັບເຈົ້າຂອງໂຄງການ ແລະ ຜູ້ຮັບເໝົາກໍ່ສ້າງໂຄງການດັ່ງກ່າວ, ເພື່ອປະຕິບັດວຽກໃຫ້ເປັນເອກະພາບ ແລະ ແກ້ໄຂບັນຫາຕ່າງໆ ໃນການດຳເນີນການກໍ່ສ້າງໂຄງການດັ່ງກ່າວ ແລະ ລາຍງານຂັ້ນເທິງໄດ້ຮັບຊາບ.

11) ກຳນົດຫົວໜ່ວຍລາຄາຊົດເຊີຍ ທີ່ເຫັນວ່າເໝາະສົມແກ້ໃຫ້ຄອບຄົວຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການຕາມເງື່ອນໄຂຕົວຈິງຂອງພື້ນທີ່.

ມາດຕາ 2: ແຕ່ງຕັ້ງອານຸກຳມະການປະສານງານໂຄງການ ແລະ ຊົດເຊີຍຜົນກະທົບມີ, ດັ່ງນີ:

| | | |
|---|---|---|
| 1. ທ່ານ ສົມຫວັງ ສີລາເພັດ | ຮອງຫົວໜ້າພະແນກ ພບຂ | ເປັນຫົວໜ້າ |
| 2. ທ່ານ ສາຍທະລາ ໂສທິດາ | ຮອງເຈົ້າ ເມືອງຊານໄຊ | ເປັນຮອງ |
| 3. ທ່ານ ພູຊົງ ໄຊຍະເພັດ | ຫົວໜ້າຂະແໜງທຸລະກິດພະລັງງານ | ເປັນຄະນະ |
| 4. ທ່ານ ອັນນາ ແກ້ວມະນີວົງ | ຫົວໜ້າຂະແໜງນະໂຍບາຍ ແລະ ແຜນພະລັງງານ | ເປັນຄະນະ |
| 5. ທ່ານ ນາໄລ ນໍລະສິງ | ຫົວໜ້າຂະແໜງຄຸ້ມຄອງພະລັງງານ ພະແນກ ພບຂ | ເປັນຄະນະ |
| 6. ທ່ານ ທັນປະເສີດ ແສງທະລີ | ຮອງກອງຄຸ້ມຄອງປ່າປ້ອງກັນ (ພະແນກ ກປຂ) | ເປັນຄະນະ |
| 7. ທ່ານ ຄຳຜຸຍ ໄຊຍະສອນ | ຫົວໜ້າຂະແໜງສິດແວດລ້ອມ (ພະແນກ ຊສ) | ເປັນຄະນະ |
| 8. ທ່ານ ບຸນໜາ ແກ້ວນາມວົງສາ | ວ່າການແທນຫົວໜ້າຂະແໜງທີ່ດິນ (ພະແນກ ຊສ) | ເປັນຄະນະ |
| 9. ທ່ານ ຂັນຕິສຸກ ພິຈິດ | ຫົວໜ້າຫ້ອງການ ຍທຂ ເມືອງຊານໄຊ | ເປັນຄະນະ |
| 10. ທ່ານ ເທຍ ເມກເມືອງໄຊ | ຮອງຫ້ອງການ ຊສ ເມືອງຊານໄຊ | ເປັນຄະນະ |
| 11. ທ່ານ ພູນສຸກ ແກ້ວຄຳເພຍ | ວ່າການແທນຫົວໜ້າຫ້ອງການ ພບ ເມືອງຊານໄຊ | ເປັນຄະນະ |
| 12. ທ່ານ ຄຳສຸກ ນາມມະຫາປວງສາ | ຫົວໜ້າຫ້ອງວ່າການ ເມືອງຊານໄຊ | ເປັນຄະນະ |
| 13. ທ່ານ ຄຳສະຫວັນ ສຸລິພຽງ | ຮອງຫ້ອງການກະສິກຳ ແລະ ປ່າໄມ້ ເມືອງຊານໄຊ | ເປັນຄະນະ |
| 14. ທ່ານນາຍບ້ານ (ພ້ອມອຳນາດການປົກຄອງບ້ານ 8 ບ້ານທີ່ຖືກຜົນກະທົບ) | | ເປັນຄະນະ |



FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

| | |
|---|---|
| 15. ຕາງໜ້າງ ບໍລິສັດ ໂຄງການຜະລິດພະລັງງານໄຟຟ້າຈາກກົງຫັນລົມ (ຜູ້ພັດທະນາໂຄງການ) | ເປັນຄະນະ |

*** ບົດບາດ ແລະ ໜ້າທີ່ຂອງອານຸກຳມະການປະສານງານໂຄງການ ແລະ ຊົດເຊີຍຜົນກະທົບ ມີດັ່ງນີ້:**

1) ຊີ້ນຳ, ນຳພາປະຕິບັດພາກສະໜາມຕົວຈິງເກັບກຳຂໍ້ມູນຜົນກະທົບຈາກໂຄງການ ຮ່ວມກັບ ບໍລິສັດທີ່ປຶກສາ, ແກ້ໄຂບັນຫາຄວາມຫຍຸ້ງຍາກ ແລະ ສະດວກທີ່ປະຕິບັດພາກສະໜາມ.
2) ເປັນເສນາທິການໃຫ້ແກ່ຄະນະຊີ້ນຳໃນການປະສານກັບ ບໍລິສັດ ຜູ້ພັດທະນາໂຄງການ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນການຄຸ້ມຄອງສິ່ງແວດລ້ອມ-ສັງຄົມ ແລະ ວຽກງານທົດແທນຄ່າເສຍຫາຍ.
3) ສ້າງແຜນວຽກ, ແຜນງົບປະມານສຳລັບການເຄື່ອນໄຫວວຽກງານຂອງຄະນະຊີ້ນຳ ແລະ ອານຸກຳມະການ.
4) ຄົ້ນຄ້ວາຮ່າງນະໂຍບາຍ ແລະ ວິທີການປ້ອງກັນບັນຫາທີ່ຈະເກີດຂຶ້ນໃນຂັ້ນຕອນຂອງການຈັດຕັ້ງປະຕິບັດໂຄງການໃຫ້ຖືກຕ້ອງສອດຄ່ອງ ເພື່ອສະເໜີຄະນະຊີ້ນຳພິຈາລະນາຮັບຮອງ.
5) ເປັນໃຈການປະສານງານໃນການສຳຫຼວດ, ເກັບກຳຂໍ້ມູນລະອຽດທີ່ຖືກຜົນກະທົບຈາກໂຄງການ.
6) ກຳນົດຫົວໜ່ວຍລາຄາຊົດເຊີຍ ທີ່ເຫັນວ່າເໝາະສົມແກ້ໄຂຄອບຄົວຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການຕາມເງື່ອນໄຂຕົວຈິງຂອງພື້ນທີ່.
7) ໄກ່ເກ່ຍເລື່ອງການຊົດເຊີຍຜົນກະທົບໃຫ້ກັບພໍ່ແມ່ປະຊາຊົນຕາມຂັ້ນຕອນ ແລະ ຫົວໜ່ວຍລາຄາຂອງແຂວງ ອອກຂໍ້ກຳນົດ.
8) ເອົາໃຈໃສ່ຈັດຕັ້ງປະຕິບັດ ແຜນການຄຸ້ມຄອງສິ່ງແວດລ້ອມ-ສັງຄົມ ແລະ ວຽກທົດແທນຄ່າເສຍຫາຍໃຫ້ສຳເລັດຕາມແຜນການທີ່ວາງໄວ້.
9) ປະຕິບັດໜ້າທີ່ຕາມຂັ້ນຕອນທີ່ລະບຸໄວ້ໃນເອກະສານຊ້ອນທ້າຍສັນຍາ ແລະ ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງຄະນະຊີ້ນຳ.
10) ລາຍງານທຸກບັນຫາຂອງພາກສະໜາມໃຫ້ແກ່ຄະນະຊີ້ນຳລວມຮັບຊາບ ເພື່ອລາຍງານຂັ້ນເທິງ.

ມາດຕາ 3: ແຕ່ງຕັ້ງຄະນະວິຊາການ ຕິດຕາມພາກສະໜາມ ມີດັ່ງນີ້:

| | | |
|---|---|---|
| 1. ທ່ານ ວັນນາ ແກ້ວມະນີວົງ | ຫົວໜ້າຂະແໜງນະໂຍບາຍ ແລະ ແຜນພະລັງງານ | ເປັນຫົວໜ້າ |
| 2. ທ່ານ ພູນສຸກ ແກ້ວຄຳເພຍ | ວ່າການແທນຫົວໜ້າຫ້ອງການ ພບ ເມືອງ ຊານໄຊ | ເປັນຮອງ |
| 3. ທ່ານ ດົກໂກ ສຸດນາສຸລິນ | ຮອງຂະແໜງຄຸ້ມຄອງພະລັງງານ ພບຂ | ເປັນຄະນະ |
| 4. ທ່ານ ແກ້ວບົວລີ ວົງວິໄຊ | ຫົວໜ້າໜ່ວຍງານຫ້ອງການ ພບ ເມືອງຊານໄຊ | ເປັນຄະນະ |
| 5. ທ່ານ ໂອລາ ສີສຸວົງ | ວິຊາການຂະແໜງນະໂຍບາຍ ແລະ ແຜນພະລັງງານ | ເປັນຄະນະ |
| 6. ທ່ານ ສຸດທິສັກ ແກ້ວບົວລິດ | ວິຊາການຂະແໜງຂໍ້ວທາງພະແນກ ຍທຂ | ເປັນຄະນະ |
| 7. ທ່ານ ສຸກສົມພອນ ໄຊຍະແສງ | ວິຊາການຂະແໜງທີ່ດິນ (ພະແນກ ຊສ) | ເປັນຄະນະ |
| 8. ທ່ານ ຜຸຍແພງ ເມືອງແຟນ | ວິຊາການຂະແໜງສິ່ງແວດລ້ອມ (ພະແນກ ຊສ) | ເປັນຄະນະ |
| 9. ທ່ານ ລັດສະໝີ ຊານຸວົງ | ວິຊາການຂະແໜງສົ່ງເສີມການລົງທຶນ (ພະແນກ ຜທ) | ເປັນຄະນະ |
| 10. ທ່ານ ນ້ອຍ ໄຊຍະພັດ | ວິຊາການຫ້ອງການກະສິກຳ ແລະ ປ່າໄມ້ ເມືອງຊານໄຊ | ເປັນຄະນະ |
| 11. ທ່ານ ຄຽງຄຳ ແກ້ວມະນີ | ວິຊາການຫ້ອງການ ຊສ ເມືອງຊານໄຊ | ເປັນຄະນະ |
| 12. ທ່ານ ບຸນທຳ ຊົມຊະນະ | ວິຊາການຫ້ອງການ ຊສ ເມືອງຊານໄຊ | ເປັນຄະນະ |
| 13. ທ່ານ ສຸກສະຫວັນ ເທດທອງດີ | ວິຊາການຫ້ອງການ ຍທຂ ເມືອງຊານໄຊ | ເປັນຄະນະ |



FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

***ບົດບາດ ແລະ ໜ້າທີ່ຂອງຄະນະວິຊາການ ຕິດຕາມພາກສະໜາມ:**

1) ຊີ້ນຳ, ນຳພາໃຫ້ກັບວິຊາການສະໜາມ, ແກ້ໄຂບັນຫາຄວາມຫຸ້ຍຸງຍາກ ແລະ ສະດວກທີ່ປະຕິບັດພາກສະໜາມ.
2) ປະສານສົມທົບກັບຂະແໜງການຕ່າງໆ, ທີ່ກ່ຽວຂ້ອງຂອງສູນກາງ, ທ້ອງຖິ່ນຕາມຄວາມເຫມາະສົມ.
3) ລົງຕິດຕາມພາກສະໜາມຕົວຈິງ ຢ່າງໜ້ອຍ ເດືອນລະຄັ້ງ.
4) ຕິດຕາມ, ການປະຕິບັດພາກສະໜາມຕົວຈິງ, ຕິດຕາມພາກການກໍ່ສ້າງຮ່ວມກັບຜູ້ພັດທະນາໂຄງການ ຫຼື ບໍລິສັດຜູ້ຮັບເໝົາກໍ່ສ້າງ, ແກ້ໄຂບັນຫາຄວາມຫຍຸ້ງຍາກ ແລະ ສະດວກທີ່ປະຕິບັດ ຢູ່ພາກສະໜາມ.
5) ລາຍງານຄວາມຄືບໜ້າ ແລະ ທຸກບັນຫາຂອງພາກສະໜາມໃຫ້ ຄະນະຊີ້ນຳລວມຮັບຊາບ, ຂອງການຈັດຕັ້ງປະຕິບັດ ເພື່ອລາຍງານຂັ້ນເທິງ.

ມາດຕາ 4: ແຕ່ງຕັ້ງກອງເລຂາ ມີດັ່ງນີ້:

| | | |
|---|---|---|
| 1. ທ່ານ ວັນນາ ແກ້ວມະນີວົງ | ຫົວໜ້າຂະແໜງນະໂຍບາຍ ແລະ ແຜນພະລັງງານ | ເປັນຫົວໜ້າ |
| 2. ທ່ານ ເພັດສະຫວັນ ພິລາວົງ | ຮອງຂະແໜງຄຸ້ມຄອງພະລັງງານ ພບຂ | ເປັນຮອງ |
| 3. ທ່ານ ແກ້ວບົວລີ ວົງວິໄຊ | ຫົວໜ້າໜ່ວຍງານຫ້ອງການ ພບ ເມືອງຊານໄຊ | ເປັນຄະນະ |
| 4. ທ່ານ ສາທິດ ຈັນດອນ | ວິຊາການຂະແໜງນະໂຍບາຍ ແລະ ແຜນພະລັງງານ | ເປັນຄະນະ |
| 5. ທ່ານ ໄອກິນາ ກົມມະເມືອງ | ວິຊາການຂະແໜງຄຸ້ມຄອງພະລັງງານ ພບຂ | ເປັນຄະນະ |

*** ບົດບາດ ແລະ ໜ້າທີ່ຂອງກອງເລຂາ:**

1) ປະສານສົມທົບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ກັບເຈົ້າຂອງໂຄງການ ແລະ ຜູ້ຮັບເໝົາກໍ່ສ້າງໂຄງການດັ່ງກ່າວ, ເພື່ອປະຕິບັດວຽກໃຫ້ເປັນເອກະພາບ ແລະ ແກ້ໄຂບັນຫາຕ່າງໆກ່ຽວກັບສິ່ງແວດລ້ອມສັງຄົມ ແລະ ວຽກທົດແທນຄ່າເສຍຫາຍ ແລະ ລາຍງານຂັ້ນເທິງໄດ້ຮັບຊາບ.
2)ເປັນໃຈກາງປະສານງານໃນການສຳຫຼວດ, ເກັບກຳຂໍ້ມູນລະອຽດທີ່ຖືກຜົນກະທົບຈາກໂຄງການ.
3)ປະຊາມະຕິ ແລະ ຮ່າງຫົວໜ່ວຍການຊົດເຊີຍ ທີ່ເຫັນວ່າມີຄວາມເໝາະສົມ, ແກ້ໄຂໃຫ້ຄອບຄົວຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການຕາມເງື່ອນໄຂຕົວຈິງຂອງພື້ນ.
4)ປະຕິບັດນ້າທີ່ຕາມຂັ້ນຕອນທີ່ໄດ້ລະບຸໄວ້ໃນເອກະສານຊ້ອນທ້າຍສັນຍາ ແລະ ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຄະນະຊີ້ນຳ.
5)ເປັນເສນາທິການໃຫ້ຄະນະຊີ້ນຳໃນການປະສານງານ ກັບບໍລິສັດຜູ້ພັດທະນາໂຄງການ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນຄຸ້ມຄອງສິ່ງແວດລ້ອມ-ສັງຄົມ ແລະ ທົດແທນຄ່າເສຍຫາຍ.
6)ຄົ້ນຄ້ວາຮ່າງນະໂຍບາຍ ແລະ ວິທີການປ້ອງກັນບັນຫາທີ່ຈະເກີດຂຶ້ນໃນຂັ້ນຕອນການຈັດຕັ້ງປະຕິບັດໂຄງການໃຫ້ຖືກຕ້ອງສອດຄ່ອງ ເພື່ອສະເໜີຄະນະຊີ້ນຳພິຈາລະນາຮັບຮອງ.
7)ລາຍງານທຸກບັນຫາຂອງພາກສະໜາມ ໃຫ້ຄະນະຊີ້ນຳລວມຮັບຊາບ ເພື່ອລາຍງານຂັ້ນເທິງ.

ມາດຕາ 5: ມອບໃຫ້ບັນດາທ່ານທີ່ໄດ້ຮັບການແຕ່ງຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມຂໍ້ຕົກລົງ ສະບັບນີ້ ຢ່າງເຂັ້ມງວດ.

- ສຳລັບງົບປະມານໃນການເຄື່ອນໄຫວຂອງຄະນະກຳມະການພາກສະໜາມ ແລະ ພາຫະນະຮັບໃຊ້ແມ່ນຜູ້ພັດທະນາໂຄງການ (ບໍລິສັດ ອິມແພັກ ເອັນເນີຈີ ເອເຊຍ ດີວີລົບເມັ້ນ ຈຳກັດ), ເປັນຜູ້ຮັບຜິດຊອບພ້ອມທັງອຳນວຍຄວາມສະດວກ. ✓

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT

- ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຄະນະກຳມະການປະສານງານ ແລະ ຊຸກຍູ້ໂຄງການທີ່ໄດ້ແຕ່ງຕັ້ງໃນຂໍ້ຕົກລົງສະບັບນີ້, ຖ້າທ່ານໃດຫາກມີການສັບຊ້ອນໄປຮັບໜ້າທີ່ຕຳແໜ່ງໃໝ່ ແມ່ນໃຫ້ຜູ້ທີ່ມາຮັບປ່ຽນແທນຕຳແໜ່ງອຳການແທນ ຕາມພາລະບົດບາດຕໍ່ໄປ.

ມາດຕາ 6: ຂໍ້ຕົກລົງ ສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປຈົນກ່ວາວຽກງານຈະສຳເລັດ.

ເຈົ້າແຂວງ

ບຸນເສີດ ເສດທິລາດ

**ບ່ອນສົ່ງ:**

- ພະແນກການກ່ຽວຂ້ອງ ຜູ້ລະ — 1 ສະບັບ
- ບໍລິສັດ ຜູ້ພັດທະນາໂຄງການ — 1 ສະບັບ
- ເກັບສຳເນົາ — 1 ສະບັບ

FOR THE EXCLUSIVE USE OF KIMURA ASAKO - JAPAN INTERNATIONAL COOPERATION AGENCY
ON 05 OCT 22 01:08:10 GMT